# ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ



## ກົດໝາຍວ່າດ້ວຍທີ່ດິນ ມາດຕາ 80

### ການແກ້ໄຂບັນຫາ ທີ່ມີລັກສະນະບໍລິຫານ ກ່ຽວກັບທີ່ດິນ

ການແກ້ໄຂ ບັນຫາ ທີ່ມີລັກສະນະບໍລິຫານ ກ່ຽວກັບທີ່ດິນ ເຊັ່ນ: ການນຳໃຊ້ທີ່ດິນໂດຍບໍ່ໄດ້ຮັບອະນຸຍາດ, ການນຳໃຊ້ທີ່ດິນໂດຍບໍ່ຖືກຕ້ອງຕາມເປົ້າໝາຍ, ຕາມລະບຽບກົດໝາຍ, ການບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງທີ່ໄດ້ຮັບມອບ, ການບໍ່ເສຍພາສີ, ອາກອນ ຫຼື ຄ່າທຳນຽມທີ່ດິນ ຕາມລະບຽບການ ທີ່ໄດ້ກຳນົດໄວ້ ແລະ ບັນຫາ ທີ່ດິນອື່ນໆ ທີ່ມີລັກສະນະ ບໍລິຫານນັ້ນແມ່ນອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບອົງການປົກຄອງຂັ້ນຂອງຕົນບ່ອນທີ່ດິນຕັ້ງຢູ່ ເປັນຜູ້ແກ້ໄຂ.

ຖ້າວ່າຜູ້ໃຊ້ ຫຼື ຜູ້ນຳໃຊ້ທີ່ດິນ ຫາກບໍ່ພໍໃຈ ຕໍ່ຄຳຕົກລົງແກ້ໄຂແລ້ວ ກໍມີສິດສະເໜີ ຕໍ່ອົງການຂັ້ນເທິງຖັດນັ້ນເປັນຜູ້ແກ້ໄຂ.

## ກົດໝາຍວ່າດ້ວຍທີ່ດິນ ມາດຕາ 81



### ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນ

ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນ ເຊັ່ນ: ການສືບທອດມູນມໍລະດົກທີ່ດິນທີ່ມີການພັດທະນາແລ້ວ, ການໂອນສິດນຳໃຊ້ທີ່ດິນ ແລະ ສັນຍາທາງແພ່ງອື່ນໆ ກ່ຽວກັບທີ່ດິນນັ້ນ ແມ່ນສານປະຊາຊົນເປັນຜູ້ພິຈາລະນາຕັດສິນ ຕາມກົດໝາຍ.



ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນນັ້ນ ແມ່ນໃຫ້ອົງການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່ໄກ່ເກ່ຍເສຍກ່ອນ, ຖ້າຫາກບໍ່ສາມາດຕົກລົງກັນໄດ້ກໍສະເໜີໃຫ້ອົງ ການປົກຄອງເມືອງ, ເທດສະບານເປັນຜູ້ໄກ່ເກ່ຍ;

ຖ້າຫາກຍັງບໍ່ສາມາດແກ້ໄຂໄດ້ ຄູ່ກໍລະນີກໍມີສິດຮ້ອງຟ້ອງຕໍ່ສານ.



ສຳນັກງານຕັ້ງຢູ່ບ້ານ: ສະພັງມີ, ເຮືອນເລກທີ: 244 ໜ່ວຍ: 16, ເມືອງ: ໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021453995, ແຟັກ: 021453996, ຕູ້ໄປສະນີ: 2795, ອີເມວ: cidseinfo@cidselao.org

ອອກແບບໂດຍ: ແສງເພັດ ວົງພະຈັນ
Graphic designer: Mr. Sengphet VONGPHACHANH
856-20 22004072; 02056003532